**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນສູງສຸດ

ເລກທີ 171 /ສປສສ

ນະຄອນຫຼວງວຽງຈັນ, ວັນທີ 6 / 6 /2013

# ຄໍາແນະນໍາ

## ຂອງປະທານສານປະຊາຊົນສູງສຸດ

**ເຖິງ:** ບັນດາ ຫົວໜ້າຄະນະສານ ຂອງສານປະຊາຊົນສູງສຸດ, ປະທານສານປະຊາຊົນທ້ອງຖິ່ນ ແລະ ສານທະຫານ ທຸກຂັ້ນໃນຂອບເຂດທົ່ວປະເທດ

**ເລື່ອງ:** ລະບຽບໃນທີ່ປະຊຸມສານ ເວລາອ່ານຄໍາຕັດສິນ ຫຼື ຄໍາພິພາກສາ

**ອີງຕາມ** ມາດຕາ 21 ຂອງກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງ ປີ 2009;

**ອີງຕາມ** ມາດຕາ 172 ຂອງກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ສະບັບປັບປຸງ ປີ 2012.

ຕາມເນື້ອໃນຂອງມາດຕາ 172 ວັກ 3 ຂອງກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ສະບັບປັບປຸງ ປີ 2012 ກ່ຽວກັບລະບຽບປະຊຸມສານ ໃນເວລາອ່ານຄໍາຕັດສິນ ແມ່ນໃຫ້ທຸກຄົນໃນທີ່ປະຊຸມສານຕ້ອງຢືນຂຶ້ນເພື່ອເຄົາລົບສານນັ້ນ ໃນການຈັດຕັ້ງປະຕິບັດຕົວຈິງ ເຫັນວ່າບໍ່ສອດຄ່ອງກັບສະພາບຕົວຈິງ.

**ປະທານສານປະຊາຊົນສູງສຸດ ອອກຄໍາແນະນໍາ ດັ່ງນີ້:**

1. ໃນການອ່ານຄໍາຕັດສິນ ຫຼື ຄໍາພິພາກສາ ໃຫ້ຜູ້ເຂົ້າຮ່ວມໃນທີ່ປະຊຸມສານທັງໝົດຢືນຂຶ້ນ ແລະ ເຄົາລົບສານ ຍົກເວັ້ນ ຄະນະປະທານສານ, ຈ່າສານ ແລະ ໄອຍະການ ນອກຈາກນັ້ນ ແມ່ນປະຕິບັດຕາມລະບຽບກົດໝາຍ;
2. ໃນການຈັດຕັ້ງປະຕິບັດຄໍາແນະນໍາສະບັບນີ້ ຖ້າພົບບັນຫາ ໃຫ້ລາຍງານເຖິງສານປະຊາຊົນສູງສຸດ ເພື່ອຄົ້ນຄວ້າພິຈາລະນາແກ້ໄຂ;

3. ເມື່ອບັນດາຫົວໜ້າຄະນະສານ ຂອງສານປະຊາຊົນສູງສຸດ, ປະທານສານປະຊາຊົນທ້ອງຖິ່ນ ໄດ້ຮັບຄຳແນະນຳສະບັບນີ້ແລ້ວ ຈົ່ງນຳໄປເຜີຍແຜ່ໃຫ້ບັນດາ ຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ຈ່າສານ ແລະ ວິຊາການ ທີ່ຂຶ້ນກັບສິດອຳນາດຂອງຕົນ ເພື່ອຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ຢ່າງເຂັ້ມງວດ.

ປະທານສານປະຊາຊົນສູງສຸດ

ຄຳພັນ ສິດທິດຳພາ

ບ່ອນສົ່ງ:

- ປະທານ, ຮອງປະທານ ສານປະຊາຊົນສູງສຸດ ທ່ານລະ 1 ສະບັບ (ເພື່ອລາຍງານ);
- ຫົວໜ້າອົງການໄອຍະການປະຊາຊົນສູງສຸດ 1 ສະບັບ (ເພື່ອຊາບ);
- ກະຊວງຍຸຕິທຳ(ເພື່ອຊາບ);
- ບັນດາຄະນະສານ ຂອງສານປະຊາຊົນສູງສຸດ, ສານປະຊາຊົນທ້ອງຖິ່ນ ແລະ ສານທະຫານ ທຸກຂັ້ນ ບ່ອນລະ 1 ສະບັບ (ເພື່ອຊາບ ແລະ ປະຕິບັດ);
- ບັນດາກົມ, ຫ້ອງການ ແລະ ສະຖາບັນຄົ້ນຄວ້າ-ຝຶກອົບຮົມ ບ່ອນລະ 1 ສະບັບ (ເພື່ອຊາບ);
- ສຳເນົາໄວ້ 2 ສະບັບ.